ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ເລກທີ : 767 /ພກພ

ນະຄອນຫລວງວຽງຈັນ, ວັນທີ : 02 MAR 2021

ໜັງສືລາຍງານ

ຮຽນ : ທ່ານ ຜູ້ອຳນວຍການໃຫຍ່ ຕະຫລາດຫລັກຊັບລາວ ທີ່ນັບຖື.

ຮຽນ : ທ່ານ ຫົວໜ້າ ສຳນັກງານ ຄະນະກຳມະການ ຄຸມຄອງຫລັກຊັບ ທີ່ນັບຖື.

ເລື່ອງ: ສະຫຼຸບແຜນລາຍຮັບ Q4 ປີ 2020 ແລະແຜນຄາດຄະເນລາຍຮັບ Q1 ປີ 2021.

- ອີງຕາມໜັງສືສະເໜີຂອງ ຕະຫລາດຫລັກຊັບລາວ ເລກທີ 770/ຕລຊລ ລົງວັນທີ 31 ມັງກອນ 2021.
- ອີງຕາມບົດບັນທຶກວິທີ ແລະ ກຳນົດເວລາການແກ້ໄຂບັນຫາຕ່າງໆໃຫ້ແກ່ ບໍລິສັດ ຜູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ເລກທີ 470/ຕລຊລ ລົງວັນທີ 29 ກໍລະກົດ 2020.

ຂ້າພະເຈົ້າ, ໃນນາມຜູ້ອຳນວຍການ ບໍລິສັດ ຜູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ຂໍອະນຸຍາດ ລາຍງານລາຍລະອຽດການຈັດຕັ້ງປະຕິບັດແຜນການຊຸດຄົ້ນທ່າແຮງການສ້າງລາຍຮັບ ແລະ ແຜນການຂະຫຍາຍຖານລູກຄ້າ ດັ່ງຕໍ່ລົງໄປນີ້:

I. ສະຫຼຸບແຜນລາຍຮັບໄລຍະສັ້ນ Q4 ປີ 2020

ກ. (ເຈົ້າຂອງໂຄງການ ລັດຖະບານ)

ລ.ດ	ຊື່ໂຄງການ	ມູນຄ່າສັນຍາ (ກີບ)	ປະຕິບັດໄດ້ໃນ ປີ2020 (ກີບ)	ປະຕິບັດໄດ້ທັງໝົດ (ກີບ)	ຮັບຊຳລະໃນປີ2020 (ກີບ)	ໄດ້ຮັບຊຳລະທັງໝົດ (ກີບ)	ໝາຍເຫດ
1	ໂຄງການກໍ່ສ້າງທາງຍົກລະດັບ ທາງປູຫີນແຮ່ ແຕ່ ບ້ານກົ່ວ ເຈຍ ຫາ ບ້ານເມືອງຮຶບ	80,881,409,364		39,183,982,905	500,000,000	4,805,140,000	ຍົກແຜນQ4 ປີ 2020 ໄປ ໃສ່ແຜນ Q1 ປີ 2021 ເນື່ອງຈາກມີການແຜ່ລະບາດ ຂອງພະຍາດ COVID-19
2	ໂຄງການກໍ່ສ້າງທາງປູຢາງສອງ ຊັ້ນ ແລະຂົວເບຕົ້ງເສີມເຫຼັກ 6 ແຫ່ງ ແຕ່ ບ້ານອູ(ເມືອງ ຫຼວງພະບາງ) ຫາ ບ້ານສີບຸນ ເຮືອງ(ເມືອງນານ)	343,614,766,665		156,472,134,873	4,025,920,000	8,331,060,000	ຍົກແຜນQ4 ປີ 2020 ໄປ ໃສ່ແຜນ Q1 ປີ 2021 ເນື່ອງຈາກມີການແຜ່ລະບາດ ຂອງພະຍາດ COVID-19
3	ໂຄງການສ້ອມແປງທາງຫຼວງ ແຫ່ງຊາດເລກທີ 13 ເໜືອ ຊ່ວງແຕ່ ບ້ານກິກຍ໊ອ ຫາ ບ້ານພອນໄຊ	10,570,432,076		4,668,520,948	500,000,000	4,600,000,000	
4	ໂຄງການສ້ອມແປງທາງຫຼວງ ແຫ່ງຊາດ ເລກທີ 1C ແຂວງ ຫຼວງພະບາງ, ຊ່ວງແຕ່ ເມືອງ ງອຍ ຫາ ຊາຍແດນເມືອງວຽງ ຄຳ	2,252,365,000		2,252,315,050	174,558,288	746,884,235	
5	ໂຄງການສ້ອມແປງທາງຫຼວງ ແຫ່ງຊາດ ເລກທີ 17A ແຂວງຫຼວງນ້ຳທາ, ຊ່ວງແຕ່ ເມືອງຫຼວງນ້ຳທາ ຫາ ເມືອງ ສີງ(ດ່ານປາງໄຮ)	4,485,348,000		3,047,870,000	236,209,925	1,010,673,692	
6	ໂຄງການ ປັບປຸງເສັ້ນທາງ ເຫດສະບານ ເມືອງຫຼວງພະ ບາງ,ແຕ່ ບ້ານໝື່ນນາ-ບ້ານ	3,308,872,504		3,308,827,154	200,000,000		

	ວຽງໃໝ່-ບ້ານທາດໂບສົດ ແລະ ບ້ານນາສຳພັນ-ບ້ານນາ ຫລວງ					2,884,940,000	
7	ໂຄງການ ປັບປຸງເສັ້ນທາງ ເທດສະບານເມືອງຫລວງພະ ບາງ ແຕ່ ພະແນກກະສິກຳ ແລະປ່າໄມ້ ຫາ ບ້ານສີຖານ	2,235,633,250		2,235,633,250	100,000,000	1,785,840,000	
8	ໂຄງການ ວຽກແກ້ໄຂທາງ ສັນຈອນ ແບບສຸກເສີນ ແຕ່ ສາມແຍກບ້ານປາກເຊືອງ ຫາ ບ້ານປາກວັງ	1,042,303,000		1,042,303,000	566,630,000	566,630,000	
9	ວຽກແກ້ໄຂສຸກເສີນ ເສັ້ນທາງ ຫຼວງທ້ອງຖິ່ນ ປີ 2020 ເສັ້ນທາງ 3053 ແຕ່ບ້ານ ທອງເໜືອ (ກິ່ວເຈຍ)ເມືອງ ໂນທອງ ແຂວງຫຼວງພະບາງ ຫາຊ/ດປາງຣົກ ຊ/ດເມືອງໃ ໝ່ ແຂວງຜົ້ງສາລີ	2,911,425,400	2,911,425,400	2,911,425,400			ໃນ : 2,911,425,400 1. ລາຍຮັບ: 2,646,750,364 2. ອມພ: 264,675,036
	ລວມ	451,302,555,259	2,911,425,400	215,123,012,580	6,303,318,213	24,731,167,927	

II. ແຜນລາຍຮັບໄລຍະກາງໃນປີ 2021

ກ. (ເຈົ້າຂອງໂຄງການ ລັດຖະບານ)

1. ໂຄງການກໍ່ສ້າງທາງຫຼວງແຫ່ງຊາດເລກທີ 13 ເໜືອ ແຕ່ ສີງເປືອຍ ຫາ ໂພນໂຮງ ລວງຍາວ 5 ກມ ມູນຄ່າ 4.500.000.000 ກີບ(ຮັບເໝົາຕໍ່ຈາກບໍລິສັດຈີນ)
2. ໂຄງການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນໄລຍະທີ 2 ຢູ່ນະຄອນຫຼວງວຽງຈັນ ລວງຍາວ 8.3 ກມ(ຮັບເໝົາຕໍ່ຈາກເກົາຫລີ)
3. ໂຄງການກໍ່ສ້າງທາງຢູ່ເຂດເສດຖະກິດພິເສດແຂວງຫຼວງພະບາງ ຮັບເໝົາຕໍ່ຈາກບໍລິສັດພູສີກຸບຮ່ວມກັບບໍລິສັດເມກາ ຫົງກົງ

ຂ. (ເຈົ້າຂອງໂຄງການ ເອກະຊົນ)

1. ໂຄງການບ້ານຈັດສັນໄລຍະແລກ 200 ຫລັງ.
2. ຮັບເໝົາຕໍ່ຊ່ວງກັບພູສີກຸບ ໂຄງການກໍ່ສ້າງພື້ນຖານໂຄງລາງ ເຂດເສດຖະກິດພິເສດ S2 ຊ່ວງທຳອິດ ມູນຄ່າ 2,5 ລ້ານ ໂດລາ

III. ແຜນລາຍຮັບໄລຍະຍາວໃນປີ 2022-2024

ກ. (ເຈົ້າຂອງໂຄງການ ລັດຖະບານ)

1. ໂຄງການກໍ່ສ້າງທາງຫຼວງແຫ່ງຊາດເລກທີ 13 ເໜືອ ແຕ່ ສີງເປືອຍ ຫາ ໂພນໂຮງ ລວງຍາວ 5 ກມ ມູນຄ່າ 4.500.000.000 ກີບ(ຮັບເໝົາຕໍ່ຈາກບໍລິສັດຈີນ)
2. ໂຄງການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນໄລຍະທີ 2 ຢູ່ນະຄອນຫຼວງວຽງຈັນ ລວງຍາວ 8.3 ກມ (ຮັບເໝົາຕໍ່ຈາກເກົາຫລີ)

ຂ. (ເຈົ້າຂອງໂຄງການ ເອກະຊົນ)

1. ໂຄງການກໍ່ສ້າງທາງຢູ່ເຂດເສດຖະກິດພິເສດແຂວງຫຼວງພະບາງ ຮັບເໝົາຕໍ່ຈາກບໍລິສັດພູສີກຸບຮ່ວມກັບບໍລິສັດເມກາ ຫົງກົງ
2. ໂຄງການບ້ານຈັດສັນໄລຍະສອງ 200 ຫລັງ.
3. ໂຄງການກໍ່ສ້າງທາງດ່ວນວຽງຈັນ-ປາກເຊ, ຊ່ວງທີ 3 ລວງຍາວ 128 ກມ (ແຕ່ ເຊໂນ ແຂວງສະຫວັນນະເຂດ ຫາ ນາປໍ່ງ ແຂວງສາລະວັນ)
4. ຮັບເໝົາຕໍ່ຊ່ວງກັບພູສີກຸບ ໂຄງການກໍ່ສ້າງພື້ນຖານໂຄງລາງ ເຂດເສດຖະກິດພິເສດ S2 ຊ່ວງສຸດທ້າຍ ມູນຄ່າ 7 ລ້ານ ໂດລາ.

ດັ່ງນັ້ນ, ຈຶ່ງໄດ້ລາຍງານມາຍັງທ່ານເພື່ອຮັບຊາບ.

ຜູ້ອຳນວຍການໃຫຍ່
ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ Phousy Construction and Development Public Company

ສີທາ ພົມມະຈິດ